“ບົດອອກຂ່າວ”

**ກອງປະຊຸມລະດັບສູງ ປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ**

***ໃນວັນທີ 9 ຕຸລາ 2025, ທີ່ ນະຄອນຫຼວງວຽງຈັນ,*** ກະຊວງການເງິນ ຮ່ວມກັບ ອົງການ ສະຫະປະຊາຊາດ ປະຈຳ ສປປ ລາວ ໄດ້ຮ່ວມກັນຈັດກອງປະຊຸມລະດັບສູງ ປະທານ ແລະ ປະທານຮ່ວມໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ເພື່ອກະກຽມໃຫ້ແກ່ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ທີ່ຈະໄດ້ຈັດຂຶ້ນໃນ ວັນທີ 19 ພະຈິກ 2025 ທີ່ ນະຄອນຫລວງວຽງຈັນ.

ກອງປະຊຸມໃນມື້ນີ້ ໃຫ້ກຽດເປັນປະທານ ຂອງ ທ່ານ ສຸລິວັດ ສຸວັນນະຈູມຄຳ, ຮອງລັດຖະມົນຕີ, ກະຊວງການເງິນ ແລະ ປະທານຮ່ວມ ຂອງ ທ່ານ ບັກໂຣເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການສະຫະປະຊາຊາດ ປະຈຳ ສປປ ລາວ ໂດຍມີ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ບັນດາທ່ານ ຮອງລັດຖະມົນຕີ, ທ່ານຫົວໜ້າຫ້ອງການ/ຮອງຫົວໜ້າຫ້ອງການ, ຫົວໜ້າກົມ/ຮອງຫົວໜ້າກົມ, ຫົວໜ້າກອງເລຂາໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ, - ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຫົວໜ້າອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທີ່ມີສຳນັກງານ, ຫ້ອງການ ຕັ້ງຢູ່ ສປປ ລາວ, ຮ່າໂນຍ ສສ ຫວຽດນາມ ແລະບາງກອກ ປະເທດໄທ ເຂົ້າຮ່ວມ ຢ່າງພ້ອມພຽງ. ໂດຍມີຈຸດປະສົງເພື່ອ: (1) ນຳສະເໜີ ຮ່າງສະບັບທີ 5 ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຮ່າງຍຸດທະສາດດ້ານການເງິນ ແລະ ກອບການຕິດຕາມ - ປະເມີນຜົນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ; (2) ລາຍງານຄວາມຄືບໜ້າໃນການກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025, ແຈ້ງໃຫ້ຊາບກ່ຽວກັບການຈັດກອງປະຊຸມສົນທະນາລະດັບສູງ ເພື່ອນຳຜົນຂອງກອງປະຊຸມດັ່ງກ່າວ ມານຳສະເໜີໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແລະ ນຳສະເໜີຮ່າງຖະແຫຼ່ງການວຽງຈັນ ສະບັບທີ III.

ໃນພາກກ່າວເປີດກອງປະຊຸມ ທ່ານ ສຸລິວັດ ສຸວັນນະຈູມຄຳ ຮອງລັດຖະມົນຕີ, ກະຊວງການເງິນ ໄດ້ກ່າວວ່າ: ມື້ນີ້ເປັນໂອກາດອັນດີ ທີ່ບັນດາກະຊວງຂະແໜງການ ແລະ ຄູ່ຮ່ວມພັດທະນາ ຈະໄດ້ປຶກສາຫາລືປະເດັນທີ່ສຳຄັນ ຕໍ່ວຽກງານການພັດທະນາ ຂອງ ສປປ ລາວ, ທັງຈະໄດ້ແລກປ່ຽນບົດຮຽນ ລວມທັງ ສ້າງຄວາມເຂົ້າໃຈເປັນອັນໜຶ່ງອັນດຽວກັນ ເພື່ອຮັບປະກັນທາງດ້ານເນື້ອໃນ ໃຫ້ແກ່ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ປີ 2025 ທີ່ຈະມາເຖິງໃນວັນທີ 19 ພະຈິກ 2025 ນີ້. ໃນນັ້ນ, ທ່ານ ຮອງລັດຖະມົນຕີ ໄດ້ຍົກໃຫ້ເຫັນເຖິງການເປີດກ້ວາງຂອງລັດຖະບານ ສະແດງອອກຢ່າງຈະ

ແຈ້ງໃນການປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນ ຕໍ່ຮ່າງສະບັບທີ 5 ຂອງ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ຮ່າງຍຸດທະສາດດ້ານການເງິນ ແລະ ກອບການຕິດຕາມ - ປະເມີນຜົນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ລາຍງານຄວາມຄືບໜ້າໃນການກະກຽມຈັດກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ປີ 2025 ພ້ອມທັງແຈ້ງໃຫ້ຊາບກ່ຽວກັບການຈັດກອງປະຊຸມສົນທະນາລະດັບສູງ ເພື່ອນຳຜົນຂອງກອງປະຊຸມດັ່ງກ່າວ ມານຳສະເໜີໃນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ແລະ ນຳສະເໜີຮ່າງຖະແຫຼງການວຽງຈັນ ສະບັບທີ III, ຄວາມຄືບໜ້າຂອງ 10 ໜ່ວຍງານຂະແໜງການ ໃນການຈັດຕັ້ງປະຕິບັດຜົນຂອງກອງປະຊຸມໂຕະມົນ 2024 ທີ່ຜ່ານມາ ແລະ ການປະກອບສ່ວນຂອງໜ່ວຍງານຂະແໜງການ ຕໍ່ການຈັດຕັ້ງປະຕິບັດແຜນບູລິມະສິດຂອງຂະແໜງການ ກໍ່ຄືປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະຈຳປີ 2025 ແລະ ແຜນປີ 2026, ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030). ພິເສດ, ທ່ານ ຮອງລັດຖະມົນຕີ ຕາງໜ້າໃຫ້ ລັດຖະບານ ສປປ ລາວ ກໍ່ຄື ກະຊວງການເງິນ ຂໍຖືໂອເກດພິເສດນີ້ ແຈ້ງເຊີນ ບັນດາການນຳຂັ້ນສູງ, ບັນດາທ່ານເອກະອັກຄະລັດຖະທູດ, ຫົວໜ້າອົງການຈັດຕັ້ງສາກົນ ທີ່ບໍ່ມີຫ້ອງການ ປະຈຳ ສປປ ລາວ ມາເຂົ້າຮ່ວມກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV ທີ່ຈະໄດ້ຈັດຂຶ້ນໃນລະຫວ່າງວັນທີ 18 – 20 ພະຈິກ 2025 ທີ່ ນະຄອນຫຼວງວຽງຈັນ, ສປປ ລາວ ດ້ວຍ.

ຫລັງຈາກນັ້ນ, ທ່ານ ບັກໂຮເດຍ ເບີຄະນ໋ອຟ ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ ໄດ້ໃຫ້ຄຳເຫັນວ່າ: ການຈັດສັນບຸລິມະສິດເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແມ່ນມີຄວາມສຳຄັນ ໂດຍສະເພາະ ໃນທາມກາງບັນຍາກາດໂລກກຳລັງປະເຊີນ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ການເມືອງ ແລະ ໄພພິບັດ ການລະດົມ ແລະ ນຳໃຊ້ແຫຼ່ງທຶນ ການຊ່ວຍເຫຼືອທາງການເພື່ອການພັດທະນາ ແມ່ນພົບກັບຄວາມຫຍຸ້ງຍາກ ແລະ ເປັນສິ່ງທ້າທາຍ. ດັ່ງນັ້ນ, ພວກເຮົາຈະຕ້ອງຮ່ວມກັນສຸມແນວຄວາມຄິດ ເພື່ອແກ້ໄຂຂໍ້ຫຍຸ້ງຍາກດັ່ງກ່າວ ໃຫ້ບັນລຸໄດ້ຕາມຈຸດປະສົງເປົ້າໝາຍ. ໃນໂອກາດທີ່ ລັດຖະບານ ມີການປັບປຸງກົງຈັກການຈັດຕັ້ງໃໝ່ ຖືໄດ້ວ່າເປັນກາລະໂອກາດອັນດີ ທີ່ພວກເຮົາ (ອົງການ ສະຫະປະຊາຊາດ, ປະເທດເພື່ອນມິດ ແລະ ຄູ່ຮ່ວມພັດທະນາ) ຈະໄດ້ຮ່ວມກັນສ້າງກົນໄກການເຮັດວຽກທີ່ດີໃນອະນາຄົດ ໂດຍສະເພາະດ້ານນະໂຍບາຍ, ຂອດການປະສານງານ ແລະ ການວາງແຜນ ໃຫ້ສອດຄ່ອງ ແລະ ມີປະສິດທິຜົນຍິ່ງຂຶ້ນ. ຫວັງຢ່າງຍິ່ງວ່າ ພວກເຮົາ, ອົງການສະຫະປະຊາຊາດ, ຄູ່ຮ່ວມພັດທະນາ ແລະ ວິງຄະນາຍາດສາກົນ ຕ້ອງມີຄວາມໝາຍໝັ້ນ ແລະ ພ້ອມແລ້ວ ທີ່ຈະສະໜັບສະໜູນ, ພ້ອມທັງໃຫ້ການຮ່ວມມືຢ່າງໃກ້ຊິດກັບ ສປປ ລາວ ເພື່ອໃຫ້ບັນເປົ້າໝາຍການພັດທະນາແບບຍືນຍົງ ແລະ ພ້ອມກັນກ້າວໄປ. ບໍ່ວ່າຈະເປັນການສະໜັບສະໜູນທາງດ້ານທຶນຮອນ, ເຕັກນິກ

ວິຊາການ ແລະ ອື່ນໆ ເຂົ້າໃນວຽກບູລິມະສິດ ໃຫ້ຫຼາຍຂຶ້ນກວ່າເກົ່າ ພ້ອມທັງ ດຶງດູດ ແລະ ລະດົມແຫຼ່ງທຶນ ໃໝ່ໆ ທີ່ມີຄຸນນະພາບ ເຂົ້າມາຊ່ວຍສະໜັບສະໜູນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ພາຍຫຼັງທີ່ສໍາເລັດການປັບປຸງກົງຈັກແລ້ວ ຈະໄດ້ຮ່ວມກັນກັບ ລັດຖະບານ ກໍ່ຄືກະຊວງຂະແໜງການກ່ຽວຂ້ອງ, ອົງການເຄືອຂ່າຍສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາ ປະເມີນ ແລະ ທົບທວນຄືນ ກົນໄກຂະບວນການໂຕະມົນ ໂດຍສະເພາະ ການປັບປຸງໂຄງຮ່າງ ແລະ ພາລະບົດບາດຂອງ ໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ ໃຫ້ສອດຄ່ອງ, ມີຄວາມກົມກຽວ ແລະ ແທດເໝາະກັບສະພາບຄວາມເປັນຈິງ ເຊິ່ງຈະໄດ້ມີການປຶກສາຫາລືສະເພາະຮ່ວມກັນໄວໆນີ້.

ໃນຕອນທ້າຍຂອງກອງປະຊຸມ, ບັນດາຄະນະຜູ້ແທນກອງປະຊຸມ ໄດ້ປະກອບຄໍາເຫັນ ໂດຍສະເໜີແຜນປະຕິບັດງານ ເພື່ອຕອບຮັບແນວທາງການປ່ຽນແປງໃໝ່ຂອງ ລັດຖະບານ ໃນນັ້ນ, ໄດ້ກະກຽມຄວາມພ້ອມໃນດ້ານນະໂຍບາຍ, ການປັບປຸງກົນໄກການປະສານງານ, ຂອບໜ້າວຽກ ແລະນິຕິກໍາອື່ນໆທີ່ກ່ຽວຂ້ອງ ຂອງໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບ ຄູ່ຮ່ວມພັດທະນາ ເພື່ອເສີມສ້າງການຈັດຕັ້ງປະຕິບັດວຽກງານ ໜ່ວຍງານຂະແໜງການ ໃຫ້ດີຂຶ້ນ ແລະ ມີປະສິດທິຜົນຫຼາຍກວ່າເກົ່າ ໂດຍສອດຄ່ອງກັບ ກົງຈັກການຈັດຕັ້ງຂອງ ລັດຖະບານ.

ກອງປະຊຸມຄັ້ງນີ້ ໄດ້ມີການແລກປ່ຽນຄໍາຄິດຄໍາເຫັນ ຢ່າງກົງໄປກົງມາ, ມີບັນຍາກາດອັນຟົດຟື້ນ, ເຕັມໄປດ້ວຍເນື້ອໃນອັນຄົບຖ້ວນ ແລະ ໄດ້ບັນລູຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ຢ່າງຈົບງາມ.

***<u>ຂໍ້ມູນເພີ່ມຕື່ມ ກະລຸນາຕິດຕໍ່:</u>***

- *ທ່ານ ສັນຕິ ຊົງນາວົງ ຫົວໜ້າພະແນກອົງການຈັດຕັ້ງສາກົນ, ກົມຮ່ວມມື ແລະການເງິນສາກົນ ກະຊວງການເງິນ*

  *Email: songnavong@gmail.com ; tel: 020 2222 3989*